# ມິຊຊາອາທິດທີ 4 ກຳນົດບຳເພັນສິນປີ C
# ວັນທີ 31 ມີນາ 2019



**ພຣະວໍລະສານໂດຍນັກບຸນລູກາ 15, 1-3, 11-32**

ໃນເວລານັ້ນ, ພວກເກັບພາສີແລະຄົນບາບທັງຫລາຍເຂົ້າມາຟັງພຣະເຢຊູເຈົ້າເທດສະໜາສັ່ງສອນ. ພວກຟາຣິເຊວແລະພວກນັກປາດພຣະຄຳພີຈຶ່ງພາກັນຈົ່ມວ່າ: ຄົນຜູ້ນີ້ເຂົ້າໝູ່ກັບພວກຄົນບາບແລະຮ່ວມຊຸມແຊວກັບພວກເຂົາ. ພຣະອົງຊົງກ່າວຄວາມປຽບທຽບນີ້ໃຫ້ພວກເຂົາຟັງວ່າ: ຍັງມີຄົນຜູ້ໜຶ່ງມີລູກສອງຄົນ, ຜູ້ນ້ອງໄດ້ເວົ້າກັບພໍ່ວ່າ: ພໍ່ເອີຍ! ມູນມໍລະດົກທີ່ເປັນສ່ວນຂອງລູກນັ້ນ, ຂໍພໍ່ຈົ່ງມອບໃຫ້ລູກເສຍ. ພໍ່ກໍເລີຍປັນມໍລະດົກນັ້ນໃຫ້. ສອງສາມວັນຕໍ່ມາ, ເມື່ອໄດ້ທ້ອນເອົາຊັບສົມບັດໝົດແລ້ວ ຜູ້ເປັນນ້ອງກໍອອກເດີນທາງໄປຍັງປະເທດອື່ນເມືອງໄກ. ແລະຢູ່ນັ້ນ, ເຂົາໄດ້ປະພຶດຕົນເປັນຄົນຊົ່ວ ລ້າງຜານເງິນແລະເຄື່ອງຂອງໝົດກ້ຽງ. ເມື່ອເຂົາຜານເງິນໝົດແລ້ວ, ບັງເອີນເກີດການແຫ້ງແລ້ງຢ່າງໃຫຍ່ໃນປະເທດນັ້ນ, ຊາຍຜູ້ນັ້ນຈຶ່ງຕ້ອງອຶດຢາກໝາກແຄ້ນ. ເຂົາຈຶ່ງໄປຮັບຈ້າງຢູ່ກັບຄົນຜູ້ໜຶ່ງໃນເມືອງນັ້ນ. ເຈົ້າຂອງເຮືອນໃຊ້ເຂົາໄປລ້ຽງໝູໃນນາຂອງລາວ. ເຂົາຫິວຫລາຍຈົນວ່າເກືອບຈະຍາດກິນນຳໝູ ແຕ່ບໍ່ມີໃຜເອົາໃຫ້.

ເຂົາຈຶ່ງຫວນຄິດໄດ້ວ່າ: ລູກຈ້າງໃນເຮືອນພໍ່ຂອງຂ້ອຍ ກໍຍັງມີເຂົ້າເຫລືອກິນ. ສ່ວນຂ້ອຍມາອຶດຈ່ອງຢູ່ນີ້ຢ່າງແສນສາຫັດ. ຂ້ອຍຈະລຸກຂຶ້ນໄປຫາພໍ່, ຈະເວົ້ານຳເພິ່ນວ່າ: ພໍ່ເອີຍ! ລູກໄດ້ທຳຜິດຕໍ່ສະຫວັນແລະຕໍ່ພໍ່ແລ້ວ! ລູກນີ້ບໍ່ສົມຊື່ວ່າເປັນລູກຂອງພໍ່ອີກ, ໃຫ້ພໍ່ຖືເອົາລູກເປັນຄືລູກຈ້າງຂອງພໍ່ຜູ້ໜຶ່ງເຖີດ. ເຂົາຈຶ່ງລຸກຂຶ້ນໄປຫາພໍ່, ເມື່ອເຂົາຍັງຢູ່ແຕ່ໄກ, ພໍ່ຫລຽວເຫັນກໍຮູ້ສຶກມີຄວາມສົງສານ ຈຶ່ງແລ່ນໄປກອດອຸ້ມເອົາ. ເຂົາຈຶ່ງເວົ້າກັບພໍ່ວ່າ: ພໍ່ເອີຍ! ລູກໄດ້ທຳຜິດຕໍ່ສະຫວັນແລະຕໍ່ພໍ່ແລ້ວ, ລູກບໍ່ສົມຊື່ວ່າເປັນລູກຂອງພໍ່ອີກ. ຝ່າຍພໍ່ຈຶ່ງເວົ້າກັບຄົນໃຊ້ວ່າ: ໄປໄວໆ, ໄປເອົາເສື້ອຜືນງາມໆມາໃຫ້ລູກເຮົາ, ເອົາແຫວນແລະເກີບມາໃສ່ໃຫ້ດ້ວຍ. ໄປຈັບເອົາງົວໂຕພີໆມາຂ້າ ພວກເຮົາຈະທຳບຸນກິນລ້ຽງຢ່າງມ່ວນຊື່ນ. ຍ້ອນວ່າລູກຂອງເຮົາຜູ້ຕາຍໄປແລ້ວ ໄດ້ກັບຄືນມາ. ເຂົາໄດ້ຫັບຫາຍໄປ ແລະໄດ້ກັບຄືນມາພົບພໍ້ກັນອີກ. ແລ້ວງານສະຫລອງກໍເລີ່ມຕົ້ນຂຶ້ນ.

ຝ່າຍລູກກົກທີ່ຢູ່ນາ, ເມື່ອກັບມາໃກ້ຈະຮອດເຮືອນກໍໄດ້ຍິນສຽງຂອງເຄື່ອງດົນຕີຮ້ອງລຳທຳເພງ, ຈຶ່ງເອີ້ນເອົາຄົນໃຊ້ຜູ້ໜຶ່ງມາຖາມຫາເລື່ອງລາວ. ຄົນໃຊ້ຕອບວ່າ: ນ້ອງຊາຍຂອງເຈົ້າກັບມາແລ້ວ ແລະຍາພໍ່ໄດ້ຂ້າງົວໂຕພີໆກິນລ້ຽງສະຫລອງ ຍ້ອນໄດ້ເຫັນລາວກັບມາເຮືອນໂດຍປອດໄພທຸກປະການ.

ຝ່າຍອ້າຍກົກຄິດຄຽດຢາກຮ້າຍເລີຍບໍ່ຍອມຂຶ້ນເຮືອນ, ພໍ່ຈຶ່ງລົງໄປເອີ້ນ. ແຕ່ເຂົາໄດ້ຕອບພໍ່ວ່າ: ລູກໄດ້ຮັບໃຊ້ພໍ່ໄດ້ຫລາຍຟ້າຫລາຍປີມາແລ້ວ ລູກບໍ່ເຄີຍໄດ້ຂັດຂືນຄຳສັ່ງອັນໃດຂອງພໍ່ ແລະພໍ່ບໍ່ເຄີຍເອົາແກະໃຫ້ລູກຂ້າກິນລ້ຽງກິນຊຸມກັບໝູ່ຂອງລູກຈັກເທື່ອ. ແຕ່ບັດນີ້, ລູກຂອງເຈົ້າຜູ້ນີ້ ທີ່ໄດ້ຜານຊັບສິນຂອງເຈົ້າໝົດກ້ຽງກັບແມ່ຈ້າງນາງເລງ, ມັນກັບຕ່າວມາ ເຈົ້າກໍຍັງໄດ້ຂ້າງົວຕົວພີໆທຳບຸນສະຫລອງມັນອີກ.

ພໍ່ຕອບວ່າ: ລູກເອີຍ! ລູກເຄີຍຢູ່ກັບພໍ່ສະເໝີມາ, ທຸກສິ່ງທີ່ພໍ່ມີກໍເປັນຂອງລູກ. ຈຳເປັນແລ້ວທີ່ເຮົາຕ້ອງເຮັດບຸນສະຫລອງ ຍ້ອນວ່ານ້ອງຊາຍຂອງເຈົ້າທີ່ຕາຍໄປແລ້ວ ໄດ້ກັບຄືນມາ, ມັນໄດ້ຫັບຫາຍໄປ ແລະກັບຄືນມາພົບພໍ້ກັນອີກ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 15, 1-3, 11-32**

ສິ່ງທີ່ໜ້າເປັນຫວ່ງທີ່ສຸດໃນຊີວິດຂອງພວກເຮົາແມ່ນຄວາມສິ້ນເຄີຍ. ຄວາມສິ້ນເຄີຍໃນການເປັນກຣິສຕັງ, ເປັນນັກບວດ, ເປັນພຣະສົງ. ແລະຜົນຮ້າຍຂອງຄວາມສິ້ນເຄີຍຄືທຳໃຫ້ພວກເຮົາບໍ່ເຫັນຄຸນຄ່າໃນສິ່ງທີ່ພວກເຮົາມີ.

ດັ່ງຄວາມປຽບທຽບຂອງພຣະວໍລະສານວັນນີ້, ພໍ່ຜູ້ໜຶ່ງມີລູກຊາຍສອງຄົນ, ລູກຊາຍຜູ້ທີສອງຢູ່ກັບພໍ່ຢ່າງສະໜຸກສຸກສະບາຍ. ຍ້ອນຄວາມສິ້ນເຄີຍຈຶ່ງທຳໃຫ້ເຂົາບໍ່ເຫັນຄຸນຄ່າແລະຄວາມສຳຄັນຂອງຄວາມຮັກຈາກພໍ່ຂອງເຂົາ ອັນເປັນທີ່ມາຂອງການແຍກຕົວອອກຈາກຄອບຄົວແລະໄປຢູ່ບ່ອນອື່ນ.

ຕໍ່ມາ, ລູກຊາຍຜູ້ນີ້ໄດ້ໃຊ້ຈ່າຍຊັບສົມບັດທີ່ຕົນມີຈົນໝົດແລະຕົກຢູ່ໃນຄວາມທຸກຍາກອຶດຢາກ. ທ້າຍສຸດ, ເຂົາໄດ້ຕັດສິນໃຈລຸກຂຶ້ນກັບຄືນເມືອຫາພໍ່ຂອງຕົນ. ສິ່ງທີ່ໜ້າຄິດໃນທີ່ນີ້ຄືຍ້ອນເຫດຜົນອັນໃດທີ່ທຳໃຫ້ລູກຊາຍຜູ້ນີ້ຕັດສິນໃຈລຸກຂຶ້ນກັບຄືນຫາພໍ່ຂອງຕົນ? ຍ້ອນຄວາມທຸກຍາກລຳບາກບໍ? ຫລືຍ້ອນເຂົາໄດ້ຄົ້ນພົບຄຸນຄ່າຄວາມຮັກຂອງພໍ່ຂອງຕົນ ຊຶ່ງແຕ່ກ່ອນເຂົາບໍ່ສຳພັດໄດ້? ດັ່ງນີ້, ຄວາມຮັກນີ້ໄດ້ເປັນແຮງຊຸກດັນໃຫ້ເຂົາກັບເມືອຫາພໍ່ຂອງເຂົາ.

ລູກຊາຍທີ່ພຣະວໍລະສານກ່າວວັນນີ້ບໍ່ແມ່ນຕົວລະຄອນໃນເລື່ອງຄວາມປຽບທຽບເທົ່ານັ້ນ ແຕ່ແມ່ນພວກເຮົາແຕ່ລະຄົນນັ້ນເອງ. ເພາະຫລາຍຄັ້ງ, ຍ້ອນຄວາມສິ້ນເຄີຍພວກເຮົາລືມໄປວ່າ ຂ້ອຍເປັນລູກຂອງພຣະເຈົ້າ. ພຣະເຈົ້າຮັກຂ້ອຍ, ພຣະອົງໃຫ້ຂ້ອຍມີຊີວິດ, ມີສຸຂະພາບ, ມີສະຕິປັນຍາ, ໃຫ້ມີພໍ່ແມ່ອ້າຍເອື້ອຍນ້ອງແລະຄົນອອ້ມຂ້າງທີ່ຮັກແພງຂ້ອຍ. ແລະຄວາມຮັກທີ່ຍິ່ງໃຫຍ່ທີ່ສຸດທີ່ພຣະເຈົ້າມີຕໍ່ຂ້ອຍຄືພຣະອົງໄດ້ຕາຍແທນຂ້ອຍເພື່ອໄຖ່ບາບຂອງຂ້ອຍແລະໃຫ້ຂ້ອຍມີຊີວິດ.

ໃນຊ່ວງເວລາແຫ່ງການບຳເພັນຕົນໃນກຳນົດບຳເພັນສິນນີ້ ແລະເປັນຕົ້ນວາຈາຂອງພຣະເຈົ້າວັນນີ້ໄດ້ຊ່ວຍພວກເຮົາໃຫ້ຕື່ນຂຶ້ນແລະອອກຈາກຄວາມສິ້ນເຄີຍໃນຊີວິດຂອງພວກເຮົາ. ເພື່ອພວກເຮົາຈະໄດ້ຄົ້ນພົບກັບຂຸມຊັບອັນແມ່ນຄວາມຮັກຂອງພຣະເຈົ້າທີ່ມີຕໍ່ພວກເຮົາ. ແລະຄວາມຮັກນີ້ທຳໃຫ້ພວກເຮົາຫຍັບເຂົ້າໃກ້ກັບພຣະເຈົ້າ, ເປີດໃຈໃຫ້ກັບພຣະອົງແລະພ້ອມທີ່ຈະຮັບຄວາມຮັກແລະການໃຫ້ອະໄພຈາກພຣະອົງ. ອັນແມ່ນຄວາມຍິນດີທີ່ແທ້ຈິງຂອງພວກເຮົາໃນກຳນົດບຳເພັນສິນນີ້.

ຂໍໃຫ້ວາຈາຂອງພຣະເຈົ້າວັນນີ້ຊ່ວຍພວກເຮົາໃຫ້ລຸກຂຶ້ນແລະກັບຄືນເມືອຫາພຣະບິດາຂອງພວກເຮົາແລະຂໍໂທດນຳພຣະອົງ. ເພາະການຂໍທີ່ສວຍງາມທີ່ສຸດໃນໂລກນີ້ຄືການຂໍໂທດ, ແລະການໃຫ້ທີ່ຍິ່ງໃຫຍ່ທີ່ສຸດຄືການໃຫ້ອະໄພນັ້ນເອງ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ